ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ທະນາຄານແຫ່ງ ສປປ ລາວ

ເລກທີ 04 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 18 MAR 2016

ສຳນັກງານ ຄຄຊ
ເລກທີ..............
ວັນທີ 18 MAR 2016
ໂທລະສັບ 021 217770

## ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ 02/2016 ແລະ ທິດທາງແຜນການໃນຕໍ່ໜ້າ

### ພາກທີ I
### ການເຄື່ອນໄຫວວຽກງານທະນາຄານໃນໄລຍະຜ່ານມາ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ ແລະ ເຂັ້ມງວດ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ວຽກງານພົ້ນເດັ່ນ**

1. ສຳເລັດການສະເໜີດຳລັດວ່າດ້ວຍໂຮງຊວດຈຳ ຜ່ານກອງປະຊຸມລັດຖະບານ ໃນເດືອນ 2/2016;

2. ສຳເລັດການລົງກວດກາທະນາຄານທຸລະກິດ ປະຈຳປີ 2015 ຈຳນວນ 9 ແຫ່ງ, ລົງກວດກາສະຖາບັນການເງິນຈຸລະພາກ ປະຈຳປີ 2015 ຈຳນວນ 4 ແຫ່ງ;

3. ໄດ້ຮັບເງິນປອມ ແລະ ອອກໃບຢັ້ງຢືນເງິນປອມໃຫ້ ທະນາຄານທຸລະກິດ 4 ໃບ ແລະ ປກສ ກຸ່ມບ້ານທາດຂາວ 1 ໃບ ໃນນັ້ນ ມີປະເພດໃບ 50.000 ກີບ ຈຳນວນ 4 ໃບ, ປະເພດໃບ 20.000 ກີບ 1 ໃບ ແລະ ປະເພດໃບ 100 ໂດລາສະຫະລັດ 1 ໃບ;

4. ສຳເລັດກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປະຈຳປີ 2016;

5. ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ: ➊. ສຳເລັດກອງປະຊຸມສະໄໝວິສາມັນ ຂອງຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຄັ້ງທີ I ປະຈຳປີ 2016; ➋. ສຳເລັດການແຈ້ງຫາບັນດາຫົວໜ່ວຍທີ່ມີໜ້າທີ່ລາຍງານ, ບັນດາກະຊວງກ່ຽວຂ້ອງພາຍໃນ ແລະ ບັນດາໜ່ວຍງານຂ່າວກອງທາງດ້ານການເງິນ FIU ຕ່າງປະເທດ ກ່ຽວກັບການປະກາດສ້າງຕັ້ງຍົກໜ່ວຍງານຂໍ້ມູນຕ້ານ

ການຟອກເງິນ ຂຶ້ນເປັນສຳນັກງານຂໍ້ມູນຕ້ານການຟອກເງິນ. ໃນເດືອນ 2/2016 ໄດ້ຮັບສຳນວນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈຳນວນ 13 ສະບັບ. ປັດຈຸບັນ STR ລວມທັງໝົດ 290 ສະບັບ;

6. ສຳເລັດການມອບໃບອະນຸຍາດດຳເນີນທຸລະກິດຊື່ລາວ ໃຫ້ແກ່ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ລາວໃໝ່ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ມະນີ;

7. ທະນາຄານແຫ່ງ ສປປ ລາວ ໄດ້ເປັນປະທານຮ່ວມກັບກະຊວງການເງິນ ແລະ ທະນາຄານກາງ ສປ. ຈີນ ໃນການຈັດກອງປະຊຸມໜ່ວຍງານພາຍໃຕ້ວຽກງານ ອາຊຽນ+3 ທີ່ຣິງກົງ ເພື່ອກະກຽມໃຫ້ແກ່ຂະບວນກອງປະຊຸມໃນລະດັບສູງຂອງກອງປະຊຸມອາຊຽນ+3 ຕະຫຼອດປີ 2016, ສຳເລັດການເປັນເຈົ້າພາບ ແລະ ປະທານກອງປະຊຸມລະດັບວິຊາການ ໃນຂະແໜງການເງິນ-ທະນາຄານກາງ ອາຊຽນ ແລະ ອາຊຽນ+3;

8. ທະນາຄານແຫ່ງ ສປປ ລາວ ໄດ້ຕາງໜ້າ ສະມາຊິກອາຊຽນ ໃນນາມ ສປປ ລາວ ເປັນປະທານວຽກງານອາຊຽນ ເຂົ້າຮ່ວມກອງປະຊຸມຮ່ວມ G 20 ປະຈຳປີ 2016 ທີ່ປັກກິ່ງ ສປ. ຈີນ.

## III. <u>ວຽກງານວິຊາສະເພາະ</u>

### 1. <u>ສະພາບເສດຖະກິດເງິນຕາສາກົນ</u>

ເສດຖະກິດໂລກຍັງປະເຊີນກັບບັນຫາ ແລະ ສິ່ງທ້າທາຍຫຼາຍດ້ານ ໂດຍສະເພາະແມ່ນຄວາມຜັນຜວນຂອງຕະຫຼາດການເງິນໂລກ ແລະ ບັນຫາເສດຖະກິດຂະຫຍາຍຕົວຊ້າລົງ ຢູ່ບັນດາປະເທດເສດຖະກິດເກີດໃໝ່ ໂດຍສະເພາະເສດຖະກິດຂອງ ສປ. ຈີນ ຊຶ່ງໄດ້ສົ່ງຜົນກະທົບຕໍ່ພາກອຸດສາຫະກຳການຜະລິດ ແລະ ພາກການສົ່ງອອກຂອງຫຼາຍປະເທດໃນທົ່ວໂລກ ເຮັດໃຫ້ເສດຖະກິດໂລກຂະຫຍາຍຕົວຊ້າ ຈາກສະພາບເສດຖະກິດດັ່ງກ່າວນັ້ນ ເຮັດໃຫ້ ສປ. ຈີນ ໄດ້ສືບຕໍ່ອັດສີດເງິນເຂົ້າສູ່ລະບົບ ຈຳນວນ 1.288 ຕື້ຢວນ ເພື່ອກະຕຸ້ນເສດຖະກິດ ແລະ ຮັກສາສະຖຽນລະພາບທາງດ້ານເງິນຕາ ການອັດສີດເງິນດັ່ງກ່າວ ໄດ້ສົ່ງຜົນໃຫ້ເງິນຢວນອ່ອນຄ່າ 1,70% ໃນເດືອນ 1/2016. ສ່ວນປະເທດຍີ່ປຸ່ນ ກໍ່ໄດ້ກະຕຸ້ນເສດຖະກິດດ້ວຍການນຳໃຊ້ນະໂຍບາຍເງິນຕາແບບຜ່ອນຄາຍ ໂດຍການປັບຫຼຸດອັດຕາດອກເບ້ຍພື້ນຖານຕິດລົບ ຈາກ 0% ມາເປັນ -0,1%. ພາຍຫຼັງໄດ້ນຳໃຊ້ມາດຕະການດັ່ງກ່າວ ໄດ້ສົ່ງຜົນໃຫ້ເງິນເຢນອ່ອນຄ່າ 1,75% ເມື່ອທຽບກັບເງິນໂດລາສະຫະລັດ, ເຮັດໃຫ້ກະແສເງິນທຶນໄຫຼອອກຈາກຍີ່ປຸ່ນ ເຂົ້າສູ່ພາກພື້ນອາຊີ ສົ່ງຜົນໃຫ້ດັດສະນີຕະຫຼາດຮຸ້ນອາຊີ ປັບຕົວເພີ່ມຂຶ້ນ. ນອກຈາກນີ້, ຍັງສົ່ງຜົນໃຫ້ສະກຸນເງິນໃນພາກພື້ນອາຊີແຂງຄ່າ ເຊັ່ນ: ເງິນຣິງກິດ ມາເລເຊຍ ແຂງຄ່າ 1,37%, ເງິນວອນ ສ. ເກົາຫຼີ ແຂງຄ່າ 0,78%, ເງິນຣູເປຍ ອິນໂດເນເຊຍ ແຂງຄ່າ 0,6% ແລະ ເງິນບາດໄທ ແຂງຄ່າ 0,4%.

ສະພາບອັດຕາແລກປ່ຽນສາກົນ ເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າ 0,78% ທຽບກັບເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີ ຍ້ອນຕົວເລກເສດຖະກິດ ສ. ອາເມລິກາ ອອກມາບໍ່ດີ ເປັນຕົ້ນຕົວເລກການຂະຫຍາຍຕົວຂອງເສດຖະກິດ ຫຼຸດລົງ ຈາກ 2% ໃນໄຕມາດ 3/2015 ມາເປັນ 0,7% ໃນໄຕມາດ 4/2015;

ລາຄານ້ຳມັນໃນຕະຫຼາດໂລກ ຫຼຸດລົງ 12,86% ມາເປັນ 32,12 ໂດລາ/ບາເຣວ ຍ້ອນນັກລົງທຶນໝັ້ນໃຈຕໍ່ການສະໜອງນ້ຳມັນ ພາຍຫຼັງ ສ. ອາເມລິກາ ຍົກເລີກມາດຕະການຂວ້ຳບາດ ອີຣ່ານ ໃນວັນທີ 16/1/2016. ສ່ວນລາຄາຄຳໃນຕະຫຼາດສາກົນ ເພີ່ມຂຶ້ນ 5% ເປັນ 1.130,12 ໂດລາສະຫະລັດ/ອອນ ຍ້ອນການອ່ອນຄ່າຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ ບວກກັບ ສປ. ຈີນ ແລະ ຣັດເຊຍ ເພີ່ມການຖືຄອງຄຳເຂົ້າໃນຄັງສຳຮອງຄຳເພີ່ມຂຶ້ນ.

## 2. ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ

ທະນາຄານແຫ່ງ ສປປ ລາວ ໄດ້ສືບຕໍ່ປະຕິບັດນະໂຍບາຍເງິນຕາຂອງຕົນດ້ວຍຄວາມລະມັດລະວັງ ເພື່ອຮັກສາສະຖຽນລະພາບເສດຖະກິດມະຫາພາກດ້ານເງິນຕາ ໃຫ້ໄດ້ຕາມຄາດໝາຍທີ່ກຳນົດໄວ້. ໂດຍສາມາດຄວບຄຸມປະລິມານເງິນ, ອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ໃຫ້ຢູ່ໃນລະດັບທີ່ເໝາະສົມ ລາຍລະອຽດດັ່ງລຸ່ມນີ້:

- ອັດຕາເງິນເຟີ້ປະຈຳເດືອນ 02/2016 (ຕົວເລກຄາດຄະເນ) ຢູ່ໃນລະດັບ 1,09% ເພີ່ມຂຶ້ນ 0,25% ຈາກ 0,84% ໃນເດືອນ 01/2016;
- ຖານເງິນຕາປະຈຳເດືອນ 02/2016 ຫຼຸດລົງ 1.320,56 ຕື້ກີບ ຫຼື 4,10% ທຽບໃສ່ເດືອນ 01/2016, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 4.544,04 ຕື້ກີບ ຫຼື 17,23%. ສາເຫດຕົ້ນຕໍຍ້ອນ ທະນາຄານທຸລະກິດ ຖອນເງິນຝາກເປັນເງິນສົດອອກນຳໃຊ້ 106,04 ລ້ານໂດລາສະຫະລັດ ແລະ ໂອນເງິນໄປຕ່າງປະເທດສຸດທິ 98,42 ລ້ານໂດລາສະຫະລັດ, ເຖິງແມ່ນວ່າທະນາຄານແຫ່ງ ສປປ ລາວ ລ່ວງໜ້າດຸ່ນດ່ຽງງົບປະມານ ບ້ວງ 1.500 ຕື້ກີບ ຈຳນວນ 786,11 ຕື້ກີບ. ປະລິມານເງິນ M2 ເພີ່ມຂຶ້ນ 103,63 ຕື້ກີບ ຫຼື 0,17% ທຽບໃສ່ເດືອນ 01/2016, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 7.470,29 ຕື້ກີບ ຫຼື 13,58% ສາເຫດຍ້ອນທະນາຄານແຫ່ງ ສປປ ລາວ ລ່ວງໜ້າດຸ່ນດ່ຽງງົບປະມານ ແລະ ທະນາຄານທຸລະກິດປ່ອຍສິນເຊື່ອໃຫ້ລູກຄ້າ;
- ສະພາບອັດຕາແລກປ່ຽນສະເລ່ຍໃນເດືອນ 02/2016 ເຫັນວ່າເໜັງຕີງໃນຂອບທີ່ກຳນົດໄວ້ ເຫັນໄດ້ຈາກເງິນກີບແຂງຄ່າ 0,18% ທຽບເງິນໂດລາສະຫະລັດ ແຕ່ອ່ອນຄ່າ 0,37% ທຽບເງິນບາດ. ສ່ວນຕ່າງລະຫວ່າງອັດຕາທະນາຄານທຸລະກິດ ກັບອັດຕາຕະຫຼາດຫຍັບເຂົ້າຫາກັນທັງສອງສະກຸນເງິນ ຄື: ຈາກ 0,54% ເປັນ 0,41% ສຳລັບກີບທຽບໂດລາສະຫະລັດ ແລະ ຈາກ 0,35% ເປັນ 0,07% ສຳລັບກີບທຽບບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າ 0,23% ທຽບກັບເງິນໂດລາສະຫະລັດ ແຕ່ອ່ອນຄ່າ 0,01% ທຽບເງິນບາດ;
- ການຊື້-ຂາຍເງິນຕາຕ່າງປະເທດໂດຍລວມ ໃນເດືອນນີ້ ແຕ່ວັນທີ (12/01-11/02/2016) ເຫັນວ່າມູນຄ່າການຊື້-ຂາຍ ເງິນຕາຕ່າງປະເທດ ຫຼຸດລົງ 13,64% ຍ້ອນປະລິມານຄວາມຕ້ອງການ ແລະ ການສະໜອງເງິນຕາຕ່າງປະເທດ ຫຼຸດລົງ ເຫັນໄດ້ຈາກທະນາຄານທຸລະກິດ ຂາຍສຸດທິ 72,68 ລ້ານໂດລາສະຫະລັດທຽບເທົ່າ, ໃນນັ້ນ ຂາຍເງິນບາດ 7.213,05 ລ້ານບາດ ຫຼື 198,99 ລ້ານໂດລາສະຫະລັດທຽບເທົ່າ ແຕ່ຊື້ໂດລາສະຫະລັດສຸດທິ 126,30 ລ້ານໂດລາສະຫະລັດ. ທະນາຄານແຫ່ງ ສປປ ລາວ ຂາຍເງິນຕາຕ່າງປະເທດໃຫ້ທະນາຄານທຸລະກິດ ສຸດທິ 132,03 ລ້ານໂດລາສະຫະລັດທຽບເທົ່າ, ໃນນັ້ນ ຂາຍໂດລາສະຫະລັດ ສຸດທິ 142,89 ລ້ານໂດລາສະຫະລັດ ແຕ່ຊື້ເງິນບາດສຸດທິ 393,52 ລ້ານບາດ ຫຼື ທຽບເທົ່າ 10,86 ລ້ານໂດລາສະຫະລັດທຽບເທົ່າ;
- ດຸນການຊຳລະກັບຕ່າງປະເທດຜ່ານ ITRS ປະຈຳເດືອນ 02/2016 (13/01/2016-12/02/2016) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານ ສຸດທິ ຈຳນວນ 155,80 ລ້ານໂດລາສະຫະລັດ. ໃນນັ້ນ, ກະແສເງິນໄຫຼອອກ ຈຳນວນ 991,20 ລ້ານໂດລາສະຫະລັດ ຍ້ອນທະນາຄານທຸລະກິດ ແລະ ຫົວໜ່ວຍທຸລະກິດຊຳລະເງິນກູ້ຢືມຈາກຕ່າງປະເທດ ຈຳນວນ 472,42 ລ້ານໂດລາສະຫະລັດ ແລະ 24,80 ລ້ານໂດລາສະຫະລັດ ຕາມລຳດັບ. ສ່ວນ

ກະແສເງິນໄຫຼເຂົ້າ ມີ 835,40 ລ້ານໂດລາສະຫະລັດ ຍ້ອນທະນາຄານທຸລະກິດ ແລະ ຫົວໜ່ວຍທຸລະກິດກູ້ຢືມເງິນຈາກຕ່າງປະເທດ ຈຳນວນ 728,60 ລ້ານໂດລາສະຫະລັດ ແລະ 23,44 ລ້ານໂດລາສະຫະລັດ ຕາມລຳດັບ.

## 3. ການລະດົມເງິນຝາກ, ການປ່ອຍສິນເຊື່ອ ແລະ ແກ້ໄຂໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ

ການລະດົມເງິນຝາກຮອດວັນທີ 15/02/2016 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 53.642,74 ຕື້ກີບ, ເມື່ອທຽບໃສ່ເດືອນຜ່ານມາ ຫຼຸດລົງ 0,06%. ເງິນຝາກເປັນເງິນກີບ ຫຼຸດລົງ 0,92% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 50,86% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ເພີ່ມຂຶ້ນ 0,86% ຊຶ່ງກວມເອົາ 49,14% ຂອງເງິນຝາກທັງໝົດ;

ການປ່ອຍສິນເຊື່ອຮອດວັນທີ 15/02/2016 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 48.090,97 ຕື້ກີບ ເພີ່ມຂຶ້ນ 2,50% ເມື່ອທຽບໃສ່ເດືອນຜ່ານມາ. ໃນນັ້ນ, ສິນເຊື່ອເປັນເງິນກີບ ກວມເອົາ 48,62% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດ ກວມເອົາ 51,38% ຂອງສິນເຊື່ອທັງໝົດ;

ໃນເດືອນ 02/2016 ທະນາຄານນະໂຍບາຍ ປ່ອຍສິນເຊື່ອທັງໝົດ 2,22 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 94,29% (ໃນເດືອນ 01/2016 ປ່ອຍສິນເຊື່ອ ຈຳນວນ 38,88 ຕື້ກີບ). ເກັບຕົ້ນທຶນໄດ້ 25,68 ຕື້ກີບ, ເກັບດອກເບ້ຍໄດ້ 6,78 ຕື້ກີບ. ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ. ຍອດສິນເຊື່ອຮອດທ້າຍເດືອນ 02/2016 ມີຈຳນວນ 2.636,52 ຕື້ກີບ ເທົ່າກັບ 86,48% ທຽບໃສ່ແຜນປີ 2016. ໃນນີ້, ສິນເຊື່ອຢູ່ເມືອງເປົ້າໝາຍ 1.710,38 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 226,01 ຕື້ກີບ, ບ້ານເຣັດທົດລອງ 3 ສ້າງ 259,22 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 440,91 ຕື້ກີບ. ໃນນີ້: ໜີ້ NPL ມີຈຳນວນ 679,77 ຕື້ກີບ ກວມເອົາ 25,78% ຂອງຍອດສິນເຊື່ອທັງໝົດ.

ຍອດເຫຼືອໜີ້ຕ້ອງຮັບທວງຍາກ[1] (NPL) ຂອງທະນາຄານທຸລະກິດທົ່ວລະບົບ (ບໍ່ລວມທະນາຄານນະໂຍບາຍ) ຮອດເດືອນ 01/2015 ມີຈຳນວນ 2.189,74 ຕື້ກີບ ເພີ່ມຂຶ້ນ 59,25% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 3,59% ຂອງຍອດເຫຼືອສິນເຊື່ອທັງໝົດ.

## 4. ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ

### 4.1. ການເຄື່ອນໄຫວຊຳລະສະສາງ

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ມີຈຳນວນ 3.524 ສະບັບ ເພີ່ມຂຶ້ນ 11,41% ເປັນເງິນຈຳນວນ 2.531,22 ຕື້ກີບ ເພີ່ມຂຶ້ນ 3,10% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈຳນວນ 124 ຄັ້ງ ມີມູນຄ່າການໂອນ 551,08 ຕື້ກີບ ເພີ່ມຂຶ້ນ 28,13% ເມື່ອທຽບໃສ່ເດືອນຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/01/2016-24/02/2016 ມີການເຄື່ອນໄຫວຈຳນວນ 9.087 ຄັ້ງ ລາຍລະອຽດມີ ດັ່ງນີ້:

---

[1] ເດືອນ 02/2016 ຍັງບໍ່ສາມາດລາຍງານໄດ້ ເນື່ອງຈາກລະບົບເກັບກຳຂໍ້ມູນຍັງເກັບກຳຂໍ້ມູນໄດ້ບໍ່ຄົບຖ້ວນ;

- **ສະກຸນເງິນກີບ:** ມີການເຄື່ອນໄຫວ 9.026 ຄັ້ງ ມີມູນຄ່າການໂອນ 3.161,09 ຕື້ກີບ ເພີ່ມຂຶ້ນ 54,04% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານ ສົ່ງເສີມກະສິກຳ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 2.110 ຄັ້ງ ຈາກທະນາຄານທີ່ເຮັດທຸລະກຳທັງໝົດ 35 ທະນາຄານ, 1 ຕະຫຼາດຫຼັກຊັບ ແລະ Bconnex;
- **ກະຊວງການເງິນ:** ມີການເຄື່ອນໄຫວ ຈຳນວນ 61 ຄັ້ງ ມີມູນຄ່າ 321,67 ຕື້ກີບ ຫຼຸດລົງ 18,12% ທຽບໃສ່ເດືອນຜ່ານມາ.

## 4.2 ການຊື້-ຂາຍພັນທະບັດ

ພາຍໃນເດືອນ 02/2016 ພັນທະບັດກະຊວງການເງິນບ້ວງສະສົມທຶນ (ທະນາຄານແຫ່ງ ສປປ ລາວ ບໍ່ຄ້ຳປະກັນ) ມີການຈຳໜ່າຍ ຈຳນວນ 5 ຕື້ກີບ. ມີການໄຖ່ຖອນພັນທະບັດບ້ວງຈຳໜ່າຍເອງເພື່ອລ້າງໜີ້ເກົ່າ ຈຳນວນ 32 ຕື້ກີບ. ປັດຈຸບັນພັນທະບັດກະຊວງການເງິນ ມີທັງໝົດ 3 ບ້ວງ ຊຶ່ງມີຍອດເຫຼືອ 5.950,80 ຕື້ກີບ ແລະ 90 ລ້ານໂດລາສະຫະລັດ (ບ້ວງລະດົມທຶນຈາກທະນາຄານທຸລະກິດ ໂດຍກົງ ຈຳນວນ 530 ຕື້ກີບ ແລະ 90 ລ້ານໂດລາ, ບ້ວງລ້າງໜີ້ 3.590,80 ຕື້ກີບ, ບ້ວງລະດົມທຶນຈາກທະນາຄານທຸລະກິດ ປະມູນຜ່ານທະນາຄານແຫ່ງ ສປປ ລາວ ຈຳນວນ 1.830 ຕື້ກີບ).

ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 02/2016 ບໍ່ມີການເຄື່ອນໄຫວ. ປັດຈຸບັນຍັງມີຍອດເຫຼືອພັນທະບັດທີ່ຍັງບໍ່ທັນມີການໄຖ່ຖອນ ຈຳນວນ 254 ລ້ານໂດລາສະຫະລັດ. ພາຍໃນເດືອນນີ້ ມີການຈ່າຍດອກເບ້ຍໃຫ້ທະນາຄານທຸລະກິດ ຈຳນວນ 0,49 ລ້ານໂດລາສະຫະລັດ.

## 5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

- ດັດຊະນີຕະຫຼາດຫຼັກຊັບລາວ ໃນເດືອນນີ້ ປິດຢູ່ທີ່ 1.171,23 ຈຸດ ຫຼຸດລົງ 0,88% ເມື່ອທຽບໃສ່ເດືອນຜ່ານມາ ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 5,59 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 31,02 ຕື້ກີບ ເພີ່ມຂຶ້ນ 882,75% ທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 56,38% ຂອງມູນຄ່າການຊື້-ຂາຍທັງໝົດ.
- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.420 ກີບ/ຮຸ້ນ ຫຼຸດລົງ 595 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 523.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,31 ຕື້ກີບ ເພີ່ມຂຶ້ນ 193,60% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 41,48% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,59%[2].
- ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.899 ກີບ/ຮຸ້ນ ເພີ່ມຂຶ້ນ 96 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 4,65 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 27,45 ຕື້ກີບ ເພີ່ມຂຶ້ນ 1.384,90% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ

[2] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

ສະເລ່ຍ ກວມເອົາ 57,98% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[3].

- ຮຸ້ນຂອງບໍລິສັດ ລາວເວິນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 7.300 ກີບ/ຮຸ້ນ ເພີ່ມຂຶ້ນ 59 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າຊື້-ຂາຍ 0,73 ລ້ານກີບ ຫຼຸດລົງ 60,62% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 50% ຂອງມູນຄ່າຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].
- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.876 ກີບ/ຮຸ້ນ ເພີ່ມຂຶ້ນ 33 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 300.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 864,16 ລ້ານກີບ ເພີ່ມຂຶ້ນ 918,29% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 30,99% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[5].
- ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.347 ກີບ/ຮຸ້ນ ຫຼຸດລົງ 14 ກີບ/ຮຸ້ນ ມີປະລິມານການຊື້-ຂາຍທັງໝົດ 117.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 391,89 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ສະເລ່ຍກວມເອົາ 47,86% ຂອງມູນຄ່າການຊື້-ຂາຍຮຸ້ນ SVN ທັງໝົດ. ສັດສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 4,21%[6].

[3] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%;
[4] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;
[5] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;
[6] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

## ພາກທີ II
## ທິດທາງແຜນການໃນຕໍ່ໜ້າ

**I. ວຽກງານການເມືອງແນວຄິດ**

ສືບຕໍ່ນໍາພາການເມືອງ-ແນວຄິດຂອງພະນັກງານໃຫ້ມີຄວາມສະຫງົບ ແລະ ເຊື່ອມຊຶມບັນດາແນວທາງຂອງພັກ-ລັດ, ຈັດຕັ້ງເຜີຍແຜ່ເອກະສານຕ່າງໆ ທີ່ຂັ້ນເທິງໄດ້ມອບໝາຍໃຫ້ພະນັກງານໄດ້ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຂອງຕົນ, ຊຸກຍູ້ສົ່ງເສີມໃຫ້ພະນັກງານເພີ່ມຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ຍົກສູງຄວາມສາມັກຄີພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ວຽກງານວິຊາສະເພາະ**

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກໍານົດໄວ້ໃນແຜນງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ຄົ້ນຄວ້າສ້າງແບບຈໍາລອງເສດຖະກິດມະຫາພາກ ແລະ ອັດຕາແລກປ່ຽນ; ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ຄວບຄຸມປັດໄຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສໍາຮອງເງິນຕາຕ່າງປະເທດໃຫ້ມີປະສິດທິພາບ;
- ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນໍາໃຊ້ເງິນກີບ ແລະ ການຊໍາລະໂດຍບໍ່ໃຊ້ເງິນສົດໂດຍໃນເດືອນຕໍ່ໄປຈະສືບຕໍ່ລົງກວດກາຕິດຕາມສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;
- ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວ ດ້ວຍການອອກພັນທະບັດ, ໃບຢັ້ງຢືນເງິນຝາກ, ສະຫຼາກປະຢັດ ແລະ ຮູບການອື່ນໆ ທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ຫັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ພ້ອມທັງ ສືບຕໍ່ຄົ້ນຄວ້າປັບປຸງນະໂຍບາຍ, ກົນໄກການຄຸ້ມຄອງສິນເຊື່ອຂອງລະບົບທະນາຄານ ແລະ ສະຖາບັນການເງິນ ເພື່ອສ້າງເງື່ອນໄຂໃຫ້ນໍາໃຊ້ທຶນຮອນໄດ້ຢ່າງເຕັມສ່ວນ; ເພີ່ມທະວີການຕິດຕາມກວດກາການເຄື່ອນໄຫວສິນເຊື່ອ ຂອງສະຖາບັນການເງິນອື່ນໆ ລວມທັງສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອໃຫ້ຖືກຕ້ອງຕາມລະບຽບການ; ຕິດຕາມການນໍາໃຊ້ສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ບໍ່ເກີດດອກອອກຜົນເກີນ 3%;
- ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດເງື່ອນໄຂເພີ່ມເຕີມຂອງທະນາຄານ ມາເລຍັນ ເບີຫັດ ສາຂາໜອງດ້ວງ ເພື່ອກະກຽມອອກໃບອະນຸຍາດສ້າງຕັ້ງຖາວອນ, ທະນາຄານ ເອສທີ ຈໍາກັດ ກ່ຽວກັບການຂໍສ້າງຕັ້ງສາຂາບໍ່ແກ້ວ, ທະນາຄານ ລາວຈີນ ຈໍາກັດ ກ່ຽວກັບການສະເໜີຂໍອະນຸຍາດສ້າງຕັ້ງສາຂາບໍ່ເຕັນ ແຂວງຫຼວງນໍ້າທາ, ທະນາຄານ ອາເຣັສບີ ກ່ຽວກັບການຂໍສ້າງຕັ້ງ ສາຂານະຄອນຫຼວງວຽງຈັນ, ທະນາຄານ ຫວຽດຕິ່ນ ລາວ ຈໍາກັດ ກ່ຽວກັບການຂໍຍົກ

ລະດັບໜ່ວຍບໍລິການຈໍາປາສັກ ຂຶ້ນເປັນສາຂາ ແລະ ທະນາຄານໄຊງ່ອນເທືອງຕິ່ນ ລາວ ຈໍາກັດ ກ່ຽວກັບການສະເໜີຂໍຍົກລະດັບໜ່ວຍບໍລິການທັດສະດີ ແລະ ຈໍາປາສັກ ຂຶ້ນເປັນສາຂາ;

- ສືບຕໍ່ຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍການບໍລິຫານຊັບສິນຂອງທະນາຄານທຸລະກິດ, ສືບຕໍ່ປັບປຸງຮ່າງລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນສໍາລັບຕະຫຼາດຫຼັກຊັບລາວ ແລະ ຮ່າງລະບຽບ ວ່າດ້ວຍຄວາມພຽງພໍຂອງທຶນຂອງບໍລິສັດຫຼັກຊັບ, ສືບຕໍ່ຄົ້ນຄວ້າວິທີການກໍານົດລາຄາຮຸ້ນ IPO, PO ແລະ RO, ສືບຕໍ່ປັບປຸງຮ່າງລະບຽບ ວ່າດ້ວຍເງື່ອນໄຂໃນການຫັນປ່ຽນຮູບແບບການດໍາເນີນທຸລະກິດ ຈາກ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ມາເປັນສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ;

- ກະກຽມຈັດກອງປະຊຸມຄະນະຊີ້ນໍາລວມ ເພື່ອກະກຽມການເປັນເຈົ້າພາບ ແລະ ປະທານກອງປະຊຸມອາຊຽນ ຂະແໜງການທະນາຄານ ປີ 2016 ແລະ ສືບຕໍ່ປະສານສົມທົບກັບກະຊວງການເງິນ ເພື່ອຄວາມເປັນເອກະພາບໃນການກະກຽມ ເປັນເຈົ້າພາບກອງປະຊຸມອາຊຽນຂະແໜງການເງິນ-ທະນາຄານ ປີ 2016;

- ຕິດຕາມການກະກຽມຫັນບໍລິສັດ ຊີມັງລາວ ເປັນບໍລິສັດມະຫາຊົນ ເພື່ອອອກຮຸ້ນຄັ້ງທໍາອິດ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ;

- ສືບຕໍ່ສັງລວມ ແລະ ກວດກາ ການຮັກສາລະດັບຖານະເງິນຕາຕ່າງປະເທດຂອງບັນດາທະນາຄານທຸລະກິດ;

- ຄົ້ນຄວ້າລົງເລິກເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ ແລະ ສືບຕໍ່ເຮັດວຽກກັບບໍລິສັດ ເອີນແອນຢັງ ລາວ ຈໍາກັດ ໃນການສ້າງແຜນຈັດຕັ້ງປະຕິບັດ ຫຼັກການບາເຊວ 2;

- ສືບຕໍ່ແຜນການລົງໄປຕິດຕັ້ງໂປຣແກຣມການເຄື່ອນໄຫວບັນຊີ ຫຼື CBs Account statement online ຂອງທະນາຄານທຸລະກິດ ຢູ່ທະນາຄານແຫ່ງ ສປປ ລາວ;

- ບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ ສືບຕໍ່ສະຫຼຸບການເຄື່ອນໄຫວວຽກງານ ປະຈໍາປີ 2015 ແລະ ແຜນການປີ 2016 ແລະ ສະຫຼຸບການຈັດຕັ້ງປະຕິບັດລາຍຮັບ-ລາຍຈ່າຍ ປະຈໍາປີ 2015 ແລະ ແຜນການປີ 2016;

- ສືບຕໍ່ລາຍງານທຸລະກໍາທີ່ມີລັກສະນະພາໃຫ້ສົງໄສວ່າເປັນການຟອກເງິນ ຈາກທະນາຄານທຸລະກິດ ເພື່ອວິເຄາະ ແລະ ລາຍງານຕໍ່ເຈົ້າໜ້າທີ່ສືບສວນ-ສອບສວນ;

- ສືບຕໍ່ເສີມຂະຫຍາຍສາຍພົວພັນຮ່ວມມືກັບສາກົນຜ່ານການຮ່ວມມືສອງຝ່າຍ, ຫຼາຍຝ່າຍ ແລະ ຮ່ວມມືກັບຂົງເຂດພາກພື້ນຢ່າງກວ້າງຂວາງ ແລະ ຮອບດ້ານ;

- ສືບຕໍ່ວຽກງານປ້ອງກັນເວນຍາມອາຄານສໍານັກງານໃຫ້ມີຄວາມສະຫງົບປອດໄພ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ ລາວ ຜູ້ວ່າການ

**ດຣ ສົມພາວ ໄຟສິດ**